FRANCE EDUCATION INTERNATIONAL

INSTITUT FRANÇAIS LAOS ສະຖາບັນຝຣັ່ງ

**ຂັ້ນຕອນການສອບເສັງ DELF**
**ສຳລັບຄູອາຈານ**

ຜູ້ສະໝັກສອບເສັງ DELF ຈະບໍ່ໄດ້ຮັບອະນຸຍາດໃຫ້ລົງທະບຽນຫຼາຍໆຄັ້ງໃນເວລາດຽວກັນສຳລັບການສອບເສັງໃນລະດັບດຽວກັນ (ສະບັບການສອບເສັງທີ່ແຕກຕ່າງກັນ ຫຼື ບໍ່ກໍ່ຕາມ). ຜູ້ສະໝັກການສອບເສັງຕ້ອງລໍຖ້າຜົນຂອງການລົງທະບຽນຄັ້ງທີ 1 ກ່ອນ, ເພື່ອຈະພິຈາລະນາສອບເສັງຄືນຄັ້ງໃໝ່: "ຜູ້ສະໝັກ ມີສິດລົງທະບຽນສອບເສັງຕາມເທົ່າທີ່ຕ້ອງການ ຈົນກວ່າຈະໄດ້ຮັບໃບປະກາດເສັງຜ່ານ, ພາຍໃຕ້ເງື່ອນໄຂທີ່ຈະຕ້ອງໄດ້ຮັບຜົນສອບເສັງທີ່ລົງທະບຽນແຕ່ລະຄັ້ງກ່ອນ ຈຶ່ງຈະສາມາດດຳເນີນການລົງທະບຽນຄັ້ງໃໝ່ໄດ້." (https://www.ciep.fr/delf-dalf/droits-devoirs-candidats).

DELF-DALF ແມ່ນການສອບເສັງ ປະເມີນຄວາມຮູ້ລະດັບພາສາຝຣັ່ງຂອງແຕ່ລະບຸກຄົນ ເຊິ່ງບໍ່ສາມາດປຸ່ນຄວາມຮູ້ຄວາມສາມາດເປັນການທ່ອງບົດທີ່ກະກຽມໄວ້ ໃນຮູບແບບການຈື່ຈຳເນື້ອໃນການຕອບຄຳຖາມ; ດັ່ງນັ້ນ, ບົດບັນທຶກທີ່ຖືກຈົດຈຳ ຫຼື ບົດທີ່ຖືກດັດແກ້ໄຂ ແລະ ຖືກລະບຸໄວ້ໃນສຳເນົາຜູ້ສອບເສັງຫຼາຍສະບັບ ເມື່ອຜູ້ກວດບົດສອບເສັງພົບເຫັນຈະຖືກພິຈາລະນາວ່າເປັນການລະເມີດກົດລະບຽບການສອບເສັງໂດຍລັກເອົາຄວາມຄິດຜູ້ອື່ນ ແລະ ຈະສົ່ງຕໍ່ໃຫ້ຄະນະກຳມະການວິໄນຂອງປະເທດຝຣັ່ງ-ການສຶກສາສາກົນ ກວດກາພິຈາລະນາຕາມຄວາມຜິດຂອງບຸກຄົນດັ່ງກ່າວ.

ລາຄາພິເສດສະເພາະຄູສອນພາສາຝຣັ່ງ ແລະ ຄູສອນທີ່ນຳໃຊ້ພາສາຝຣັ່ງໃນອົງກອນລັດ (ໂຮງຮຽນປະຖົມ, ມັດທະຍົມ, ມະຫາວິທະຍາໄລ).

**ການລົງທະບຽນ**

ທ່ານສາມາດລົງທະບຽນສອບເສັງໄດ້ດັ່ງນີ້:

- ສົ່ງໃບລົງທະບຽນທີ່ພະແນກຮັບຕ້ອນຂອງສະຖາບັນຝຣັ່ງພ້ອມເອກະສານຢັ້ງຢືນການເຮັດວຽກ ຫຼື ສາມາດສົ່ງໃບລົງທະບຽນພ້ອມເອກະສານຢັ້ງຢືນການເຮັດວຽກ ຫາທີ່ຢູ່ accueil@if-laos.org
- ລໍຖ້າຄຳຢັ້ງຢືນການຕອບຮັບຈາກສະຖາບັນຝຣັ່ງ
- ຈ່າຍຄ່າທຳນຽມສອບເສັງ DELF ດ້ວຍເງິນສົດ (ສະກຸນເງິນກີບ) ທີ່ພະແນກຕ້ອນຮັບຂອງສະຖາບັນຝຣັ່ງ ຫຼື ສາມາດສົ່ງໃບຢັ້ງຢືນການໂອນເງິນຫາທີ່ຢູ່ accueil@if-laos.org

bfl
BRED Group

RELEVÉ D'IDENTITÉ BANCAIRE LOCAL

Nom Titulaire

INSTITUT FRANCAIS DU LAOS

| Nom Agence | Code Agence | Code BIC | Code Compensation |
|---|---|---|---|
| BFL Ltd Vientiane Main Branch | 001 | BFLLLALAXXX | |

Numéro de compte

001000036011000011

Domiciliation

BFL Ltd Vientiane Main Branch

11 Lane Xang Road Unit 19, Hatsady Neua Village VIENTIANE Capital, LAO PDR

ທ່ານສາມາດຮັບໃບບິນທັນທີຫຼັງການຊໍາລະຄ່າຮຽນເປັນທີ່ຮຽບຮ້ອຍ.

**ເອກະສານນັດເຂົ້າຫ້ອງເສັງ**

ທ່ານຈະໄດ້ຮັບເອກະສານນັດເຂົ້າຫ້ອງເສັງທາງເມວກ່ອນມື້ເສັງທີ່ໄດ້ກໍານົດໄວ້.

**ກົດລະບຽບການສອບເສັງ**

ທ່ານຈະຕ້ອງປະຕິບັດກົດລະບຽບການສອບເສັງດັ່ງນີ້:

- ມາກ່ອນເວລາສອບເສັງ 10 ນາທີຕາມໂມງທີ່ກໍານົດໃນເອກະສານນັດເຂົ້າຫ້ອງເສັງ
- ສະເໜີບັດປະຈໍາໂຕ ຫຼື ບັດນັກສຶກສາ ກ່ອນເຂົ້າຫ້ອງສອບເສັງແຕ່ລະຄັ້ງ
- ປະຕິບັດຕາມກົດລະບຽບຂອງການສອບເສັງ: ຖ້າຫາກມີການຝ່າຝືນກົດລະບຽບ ນັກສອບເສັງຈະຖືກລົງໂທດ

**ປະກາດຜົນການສອບເສັງ**

- ຫຼັງການສອບເສັງ 15 ມື້, ທ່ານສາມາດກວດເບິ່ງຜົນການສອບເສັງຂອງທ່ານໄດ້ທີ່ເວັບໄຊ http://www.if-laos.org/certification-delf/
- ຫຼັງການສອບເສັງ 3 ອາທິດ, ສາມາດຕິດຕໍ່ພົວພັນເອົາໃບຢັ້ງຢືນການເສັງຜ່ານ ໄດ້ທີ່ພະແນກຮັບຕ້ອນຂອງສະຖາບັນຝຣັ່ງ ຫຼື ສົ່ງຫາ accueil@if-laos.org ເພື່ອຂໍສະແກນເອກະສານໃຫ້.
- ຫຼັງການສອບເສັງປະມານ 3 ເດືອນ, ຈະມີຂໍ້ຄວາມແຈ້ງລົງເພດເຟສບຸກຂອງສະຖາບັນຝຣັ່ງໃຫ້ທ່ານເຂົ້າມາພົວພັນເອົາໃບປະກາດ ຕ້ອງມີບັດປະຈໍາຕົວ ຫຼື ບັດນັກສຶກສາມາຢັ້ງຢືນກ່ອນຮັບໃບປະກາດທຸກຄັ້ງ.

ທີ່ ................................, ວັນທີ......./......../ 20...

ລາຍເຊັນ